MERCYONE GENESIS

**ການຊ່ວຍເຫຼືອທາງດ້ານການເງິນ:** MercyOne Genesis ມຸ່ງໝັ້ນທີ່ຈະໃຫ້ການເບິ່ງແຍງດູແລ, ການປິ່ນປົວ ແລະ ການບໍລິການໃຫ້ແກ່ໝົດທຸກຄົນທີ່ເຂົ້າມາຫາພວກເຮົາໂດຍອີງໃສ່ຄວາມຈຳເປັນທາງການແພດ.

***ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ***

- ການຊ່ວຍເຫຼືອທາງດ້ານການເງິນ ແມ່ນສະໜອງໃຫ້ໂດຍອີງໃສ່ລາຍຮັບຂອງທ່ານ. ນີ້ແມ່ນກຳນົດໂດຍການນຳໃຊ້ ຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງ.
- ຖ້າທ່ານມີລາຍໄດ້ທີ່ 200% ຫຼື ໜ້ອຍກວ່ານັ້ນ ຂອງຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານສາມາດໄດ້ຮັບສ່ວນຫຼຸດຢ່າງເຕັມສ່ວນ. ສ່ວນຫຼຸດນີ້ຈະນຳໃຊ້ກັບການບໍລິການທີ່ຈຳເປັນທາງການແພດ.
- ຖ້າທ່ານມີລາຍໄດ້ຢູ່ລະຫວ່າງ 201% ຫາ 400% ຂອງ ລະດັບຄວາມທຸກຍາກຂອງລັດຖະບານກາງ ທ່ານອາດຈະໄດ້ຮັບສ່ວນຫຼຸດບາງສ່ວນ.
- MercyOne Genesis ຈະບໍ່ຮຽກເກັບຄ່າບໍລິການຈາກຄົນເຈັບທີ່ມີເງື່ອນໄຂຫຼາຍກວ່າອັດຕາສ່ວນຫຼຸດຂອງ Medicare.
- ການຈ່າຍຮ່ວມ, ການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດຂອງທ່ານ ອາດສາມາດໄດ້ຮັບສ່ວນຫຼຸດ. ທ່ານສາມາດມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອ ຖ້າທ່ານມີລາຍໄດ້ໜ້ອຍກວ່າ 400% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ.
- ຖ້າທ່ານກຳລັງປະເຊີນກັບຄ່າໃຊ້ຈ່າຍທີ່ໜັກໜ່ວງ, ທ່ານກໍອາດຈະໄດ້ຮັບສ່ວນຫຼຸດ. ສິ່ງນີ້ເກີດຂຶ້ນເມື່ອຄ່າໃຊ້ຈ່າຍທາງການແພດຂອງທ່ານໃນ 12 ເດືອນຜ່ານມາແມ່ນເກີນ 20% ຂອງລາຍໄດ້ຄົວເຮືອນຂອງທ່ານ. ສ່ວນຫຼຸດອາດຈະລວມທັງຄ່າຮ່ວມຈ່າຍຂອງທ່ານອີກດ້ວຍ. ນອກຈາກນັ້ນ, ກໍຍັງສາມາດລວມທັງການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດອີກດ້ວຍ.

*ກວດເບິ່ງຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງຢູ່ບ່ອນນີ້*

https://aspe.hhs.gov/topics/poverty-economic-mobility/poverty-guidelines

ການບໍລິການທີ່ເລືອກ ເຊັ່ນ: ການຜ່າຕັດເສີມຄວາມງາມ ແມ່ນບໍ່ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ.

ເພື່ອຮ້ອງຂໍການຊ່ວຍເຫຼືອທາງດ້ານການເງິນ, ໃຫ້ຕື່ມຂໍ້ມູນໃສ່ ແລະ ສົ່ງຄຳຮ້ອງຂໍສະໝັກ. ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ ຂອງ MercyOne Genesis ແລະ ຄຳຮ້ອງຂໍສະໝັກແມ່ນມີຢູ່ໃນໜ້າເວັບຂອງໂຮງໝໍ https://www.mercyone.org/genesis/for-patients/billing-and-financial-information ນອກຈາກນັ້ນ, ທ່ານກໍຍັງສາມາດຮ້ອງຂໍສຳເນົານະໂຍບາຍ ແລະ ຄຳຮ້ອງຂໍສະໝັກໄດ້ໂດຍບໍ່ເສຍຄ່າອີກດ້ວຍ ໂດຍການໄປພົບດ້ວຍຕົນເອງ, ທາງໄປສະນີຫຼື ການໂທຫາສະຖານທີ່ທີ່ທ່ານເຂົ້າຮັບການເບິ່ງແຍງດູແລ ຫຼື ໂດຍການຕິດຕໍ່ MercyOne Genesis Davenport West Medical Center, Patient Financial Services Suite #2600- FA, 1401 West Central Park Avenue, Davenport, IA 52803, ໂທຟຣີທີ່ເບີ 563-421-2233.

ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ, ຄຳຮ້ອງຂໍສະໝັກ ແລະບົດສະຫຼຸບເປັນພາສາທຳມະດາທີ່ເຂົ້າໃຈງ່າຍ ຂອງ MercyOne Genesis ໄດ້ຖືກແປເປັນພາສາອື່ນໆຫຼາຍພາສາ ແລະ ສາມາດນຳໃຊ້ໄດ້ໂດຍການຕິດຕໍ່ໂຮງໝໍ ຫຼືພະແນກບໍລິການທາງດ້ານການເງິນສຳລັບຄົນເຈັບ (Patient Financial Services) ທີ່ໄດ້ລະບຸໄວ້ຂ້າງເທິງ.

***ບັນຊີລາຍຊື່ຜູ້ໃຫ້ບໍລິການ:*** ບັນຊີລາຍຊື່ຜູ້ໃຫ້ບໍລິການທີ່ໃຫ້ການເບິ່ງແຍງດູແລສຸກເສີນ ຫຼື ທີ່ຈຳເປັນທາງການແພດຢູ່ໃນໂຮງໝໍ

MERCYONE GENESIS

ທີ່ໄດ້ຮັບການຄຸ້ມຄອງໂດຍນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງໂຮງໝໍ, ແມ່ນມີໃຫ້ທາງອອນລາຍ ຫຼື ຕາມການຮ້ອງຂໍ.

***ບັນດາແຜນການຈ່າຍເງິນໄລຍະສັ້ນ ແລະ ໄລຍະຍາວ:*** ຖ້າທ່ານບໍ່ສາມາດຈ່າຍສ່ວນແບ່ງຂອງທ່ານໄດ້, ທ່ານອາດຈະມີເງື່ອນໄຂໄດ້ຮັບບັນດາແຜນການຊໍາລະໄລຍະສັ້ນ ຫຼື ໄລຍະຍາວ. ແຜນການຈ່າຍເງິນໄລຍະສັ້ນຂອງ MercyOne Genesis ແມ່ນບໍ່ມີດອກເບ້ຍ. ບັນດາຄົນເຈັບຕ້ອງຈ່າຍຍອດເງິນຄົງເຫຼືອພາຍໃນໜຶ່ງປີ. ທ່ານສາມາດໄດ້ຮັບແຜນທີ່ມີດອກເບ້ຍໄລຍະຍາວໄດ້ ຖ້າທ່ານບໍ່ສາມາດຊໍາລະຍອດເງິນທັງໝົດໄດ້ພາຍໃນໜຶ່ງປີ.

***ການບໍລິການດ້ານການເງິນຂອງຄົນເຈັບ:*** ບັນດາທີ່ປຶກສາດ້ານການເງິນພ້ອມທີ່ຈະຊ່ວຍທ່ານ. ພວກເຂົາຈະຊ່ວຍທ່ານໃນການຕື່ມຂໍ້ມູນໃສ່ຄໍາຮ້ອງຂໍສະໝັກການຊ່ວຍເຫຼືອທາງດ້ານການເງິນອີກດ້ວຍ. ນີ້ຈະກໍານົດວ່າຈະມີການຊ່ວຍເຫຼືອຫຍັງໃຫ້ແດ່. ນີ້ລວມມີການປະເມີນການມີສິດໄດ້ຮັບ Medicaid.

ທ່ານສາມາດຕິດຕໍ່ທີ່ປຶກສາທາງດ້ານການເງິນໄດ້ ຢູ່ບ່ອນທີ່ທ່ານເຂົ້າຮັບການເບິ່ງແຍງດູແລ. ທີ່ປຶກສາທາງດ້ານການເງິນສາມາດຊ່ວຍກໍານົດວ່າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ຫຼື ບໍ່. ນອກຈາກນັ້ນ, ບັນດາທີ່ປຶກສາດ້ານການເງິນກໍ່ຍັງສາມາດໃຫ້ສໍາເນົານະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິ, ຄໍາຮ້ອງຂໍສະໝັກ ແລະ ບົດສະຫຼຸບເປັນພາສາທໍາມະດາແບບບໍ່ເສຍຄ່າອີກດ້ວຍ.